# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 1 ມົກກະຣາ 2006 (1-1-2006)

---

## <u>ເຣື່ອງຂອງວຽກງານ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ປະຖົມມະການ 1:26-28,31; 2:15; ເພັງສັຣເສີນ 127:2; ສຸພາສິດ 6:6-8; 21:5; ໂກໂລຊາຍ 3:22-4:1

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ວຽກງານແມ່ນພຣະເຈົ້າເປັນຜູ້ຕັ້ງໄວ້ກ່ອນມະນຸດຈະຕົກໃນຄວາມຜິດບາບແລະເປັນປໂຍດແລະນຳຄວາມພໍໃຈມາສູ່ຜູ້ທີ່ເຮັດວຽກແລະນຳກຽດມາສູ່ພຣະເຈົ້າດ້ວຍ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນເພື່ອຊ່ວຍທ່ານເສີມສ້າງທັສນະທີ່ຖືກຕ້ອງຕໍ່ຫົວເຣື່ອງນີ້ໂດຍ:

- ການບັນລະຍາຍເຖິງຕົ້ນຕໍແລະຄຸນຄ່າຂອງວຽກງານ; ແລະ
- ການຕັດສິນໃຈຝຶກຝົນໃຫ້ກົງກັບທັສນະວຽກງານໃນພຣະຄັມພີ

## <u>ເປັນຫຍັງເຮົາຕ້ອງໃຫ້ຄຸນຄ່າຕໍ່ວຽກງານ?</u>

ການກິນເຂົ້າທ່ຽງສລອງທຸຣະກິດຂອງພວກເຂົາໃກ້ຈະຈົບລົງແລ້ວ ແລະ ບ໊ອບ ກໍເວົ້າຂຶ້ນວ່າ "ຂ້ອຍຄິດວ່າຂ້ອຍຄວນຈະກັບໄປຫາບໍ່ເກືອເກົ່າຂອງຂ້ອຍອີກ. ເຈົ້າກໍກຽດຊັງທີ່ຈະກັບໄປເຮັດວຽກຫລາຍທໍ່ກັນກັບຂ້ອຍບໍ່? ເຈົ້າກໍບໍ່ປາຖນາທີ່ຈະໃຫ້ພວກເຮົາສາມາດໂທຣໄປຄອບນາຍວ່າບໍ່ສະບາຍແລະກໍໄປຕຶກເບັດກັນເສັຽດີກວ່າບໍ?"

"ບໍ່ເຖິງຂັ້ນນັ້ນດອກ," ໂຈ ບອກວ່າ "ຄວາມຈິງແລ້ວຂ້ອຍມັກວຽກຂອງຂ້ອຍຫລາຍ. ພຣະເຈົ້າອວຍພອນຂ້ອຍໃຫ້ວຽກນີ້ເກີດຫມາກຜົນໃຫ້ກັບຄອບຄົວ; ແລະສິ່ງທີ່ຈົບງາມໄປກວ່ານັ້ນອີກກໍຄືພຣະອົງທຳງານຜ່ານວຽກນີ້ເພື່ອເປັນປໂຍດໃຫ້ແກ່ຜູ້ອື່ນດ້ວຍ."

ມີຄຳກ່າວຢ່າງມາກມາຍທີ່ຫລອກລໍ້ຄົນໃຫ້ຫລົງຜິດໄປຈົດຈໍ່ພໍໃຈໃນການຂັບຂັນຫລາຍໆຢ່າງ, ຫລາຍຄັ້ງຄົນຈຶ່ງຖືກຍົວະໃຫ້ເຊື່ອວ່າວຽກງານບໍ່ນຳຄວາມຄົບເຕັມແລະຄວາມເພິ່ງພໍໃຈມາສູ່ຕົນ. ແມ້ກະທັ້ງຄຣິສຕຽນກໍມີທັສນະຕໍ່ວຽກງານແບບຫນ້າເບື່ອແຫນງຫລືຮຽກວ່າ "ຜີຕົວແສບ." ພຣະຄັມພີຢັ້ງຢືນວ່າວຽກງານບໍ່ພຽງແຕ່ສຳຄັນເທົ່ານັ້ນແຕ່ມັນຍັງເປັນພາກສ່ວນຂອງການອອກແບບຂອງພຣະເຈົ້າເພື່ອມວນມະນຸດ. ໃນຖານະເປັນພວກທີ່ເຊື່ອກໍຍິນດີຮັບເອົາການສອນຈາກພຣະຄັມພີກ່ຽວເຣື່ອງວຽກງານ-ໂດຍທີ່ພວກເຂົາຍິນດີຮັບທັສນະກ່ຽວກັບວຽກງານອັນຖືກຕ້ອງໃນພຣະຄັມພີ-ພວກເຂົາຈະພົບກັບຄວາມຄົບເຕັມແລະຄວາມພໍໃຈແທນທີ່ຈະເຫັນພຽງແຕ່ວ່າເປັນສິ່ງຍາກລຳບາກຫລື "ບ່ອນຫາລາຍໄດ້ໃນການດຳຣົງຊີວິດ."

### *ເປັນຫຍັງການເຮັດວຽກງານຈຶ່ງສຳຄັນ?*

### <u>ສຶກສາພຣະຄັມພີ</u>

**1. <u>ວຽກງານແມ່ນຄວາມຄິດຂອງພຣະເຈົ້າ</u>** (ປຖກ 1:26-28,31; 2:15)

***ການເຮັດວຽກທຳງານຂອງທ່ານສະທ້ອນໃຫ້ເຫັນພາບພົດຂອງພຣະເຈົ້າຢ່າງໃດ?***

ຫລັງຈາກການນິຣະມິດສ້າງມະນຸດໃຫ້ຄ້າຍຄືກັບພຣະອົງແລ້ວ, ພຣະເຈົ້າໄດ້ປະທານວຽກໃຫ້ພວກເຂົາເຮັດ. ກຸນແຈດອກສຳຄັນຄືໃນປະຕິກິຣິຍາຂອງພວກເຮົາຈະຮັບຮູ້ວ່າວຽກງານແມ່ນພາກສ່ວນຂອງແຜນການອັນສົມບູນເພື່ອຊີວິດ

ຂອງພວກເຮົາ. ຫລາຍຄົນຄິດວ່າວຽກງານແມ່ນການສາບແຊ່ງຈາກຄວາມຜິດບາບຂອງອາດາມ. ຄວາມຈິງແລ້ວ, ພຣະເຈົ້າໄດ້ປະທານວຽກໃຫ້ອາດາມເຮັດກ່ອນມະນຸດຈະຕົກໃນຄວາມຜິດບາບ(ປຖມກ 1:28; 2:15). ການທຳງານແມ່ນເຈດຕະນາທີ່ໃຫ້ເກີດຜົນດີຕໍ່ມະນຸດເອງຊຶ່ງເປັນພາກສ່ວນຂອງການອອກແບບອັນໃຫຍ່ຂອງພຣະເຈົ້າ.

ພຣະເຈົ້າໄດ້ຊົງສ້າງພວກເຮົາໃຫ້**ຄ້າຍຄືພຣະອົງ**, ຈື່ໄດ້ບໍ່ວ່າ, ພຣະເຈົ້າຊົງນິຣະມິດສ້າງຟ້າສວັນແລະແຜ່ນດິນໂລກ, ພືດພັນແລະສັດທຸກຊະນິດ, ແລະຕລອດທັງມະນຸດຄູ່ທຳອິດ. ວັນສະບາໂຕໄດ້ເປັນວັນບໍຣິສຸດຊຶ່ງພຣະເຈົ້າໄດ້ຢຸດພັກຜ່ອນຈາກການເຮັດວຽກງານຂອງພຣະອົງ. ເມື່ອພວກເຮົາຖືກສ້າງໃຫ້ຄ້າຍຄືພຣະອົງ, ເປັນຫຍັງເຮົາຄວນຍັງຈະຕົກຕະລຶງວ່າວຽກງານແມ່ນພາກສ່ວນຂອງການເປັນມາຕາມທຳມະຊາດ?

ພຣະເຈົ້າໄດ້**ປະທານອຳນາດ**ໃຫ້ມະນຸດເໜືອສັພສິ່ງທີ່ຖືກສ້າງຂຶ້ນນັ້ນ-**ພວກປາ,ນົກ,ສັດຕ່າງໆຕລອດທັງສັດເລືອຄານເທິງແຜ່ນດິນໂລກ**. ພຣະເຈົ້າປະທານໜ້າທີ່ຮັບຜິດຊອບໃຫ້ມະນຸດ**ບົວລະບັດຮັກສາທຸກຢ່າງໃນໂລກ**. ການຄຸ້ມຄອງຮັກສາສິ່ງສາຣະພັດກໍຍັງສືບທອດກາຍມາເປັນໜ້າທີ່ຮັບຜິດຊອບຂອງພວກເຮົາດ້ວຍ. ໜ້າທີ່ນັ້ນລວມທັງການບົວລະບັດຮັກສາຄອບຄົວຂອງພວກເຮົາ(1 ຕມທ 5:8)ແລະຊ່ວຍເຫລືອຄວາມຕ້ອງການຂອງຜູ້ອື່ນ(ອຟຊ 4:28). ພວກເຮົາເຮັດສິ່ງເຫລົ່ານັ້ນໂດຍຜ່ານທາງວຽກງານຂອງພວກເຮົາ.

ເບິ່ງໃນອີກມຸມນຶ່ງຂອງເປົ້າໝາຍທີ່ພຣະເຈົ້າໄດ້ສ້າງພວກເຮົາຄືໃຫ້ສະທ້ອນ**ພາບພົດ**ຂອງພຣະອົງ. ໄດ້ຖືກຊົງສ້າງໃຫ້ຄ້າຍຄືກັບພຣະອົງ, ທັງຍິງແລະຊາຍໄດ້ຖືກອວຍພອນໃຫ້**ແຜ່ຂຍາຍ**,ແລະ**ໃຫ້ເຕັມໂລກນີ້**, ແລະ**ຮັກສາໃຫ້ມີຄວາມສງົບ**. ທັງ**ຊາຍ**ແລະ**ຍິງ**ໄດ້ຖືກປະທານວຽກງານໃຫ້ກະທຳ. ການອອກເຫື່ອເທແຮງໃນຕົວມັນເອງກໍສະທ້ອນເຖິງທັມມະຊາດຂອງພຣະເຈົ້າທີ່ພຣະອົງວາງໄວ້ໃນພວກເຮົາ. ຄວາມຈິງອັນນີ້ມີຄວາມໝາຍວ່າການງານທັງໝົດແລະວິທີການປະຕິບັດງານ ທັງສອງຢ່າງນີ້ຄວນຈະນຳກຽດມາສູ່ຜູ້ທີ່ສ້າງເຮົາແລະເຮັດໃຫ້ເປົ້າໝາຍຂອງພຣະອົງຄົບເຕັມໃນຊີວິດຂອງພວກເຮົາ. ເມື່ອພຣະເຈົ້າສິ້ນສຸດການຊົງນິຣະມິດສ້າງ, ພຣະອົງເຫັນວ່າທຸກສິ່ງຢ່າງ**ດີຫລາຍ**, ບໍ່ມີຈັກຢ່າງທີ່ຜິດພາດ. ຄວາມບາບກໍຍັງບໍ່ໄດ້ເຂົ້າໃນແດນສຸກຂະເສີມເທື່ອ, ທຸກສິ່ງທີ່ພຣະເຈົ້າສ້າງກໍຍັງບໍ່ທັນເຮັດໃຫ້ເປົ້າໝາຍທີ່ພຣະອົງມີນັ້ນຄົບເຕັມເທື່ອ. ໃນປະຖົມມະການບົດທີ່ສອງຈະເຮັດໃຫ້ເຮົາເຫັນພາບພົດແຈ້ງຂຶ້ນ. **ພຣະເຈົ້າໄດ້ເອົາຜູ້ຊາຍໄປປະໄວ້ໃນສວນເອເດັນ**. ເປົ້າໝາຍຂອງຊາຍຜູ້ນັ້ນກໍຄື**ເຮັດວຽກງານ**ແລະ**ເບິ່ງແຍງ**ສວນນັ້ນ. ລາວມີວຽກທີ່ຈະເຮັດຊຶ່ງເປັນສ່ວນຂອງເປົ້າໝາຍການຊົງສ້າງຈາກເບື້ອງເທິງ. ພວກຄົນທັງຫລາຍຄວນຍອມຮັບວ່າວຽກການງານແມ່ນພຣະພອນມາຈາກພຣະເຈົ້າເພາະວ່າພຣະອົງແຕ່ງຕັ້ງແລະການມີສ່ວນກໍ່ສ້າງວຽກງານກັບພຣະອົງໃນຄວາມໝາຍທີ່ວ່າມະນຸດຖືກສ້າງໃຫ້ຄ້າຍຄືກັບພຣະເຈົ້າ.

## 2. <u>ຜົນປໂຍດຂອງວຽກງານ</u> (ສຸພາສິດ 6:6-8; 21:5)

ພາກສ່ວນນຶ່ງໃນແຜນການຂອງພຣະເຈົ້າຕໍ່ມວນມະນຸດ, ວຽກງານແມ່ນຄວາມຕັ້ງພຣະທັຍຂອງພຣະເຈົ້າໃຫ້ມີຜົນດີສຳລັບພວກເຮົາ. ຜູ້ຂຽນພຣະທັມສຸພາສິດໄດ້ໃຊ້ມົດເພື່ອເປັນຕົວຢ່າງໃນແງ່ບອກຂອງວຽກງານທີ່ມີຜົນດີ, ທີ່ພຣະເຈົ້າໄດ້ຕັ້ງຂຶ້ນເພື່ອມະນຸດຈະໄດ້ຕາມຄວາມຕ້ອງການ.

ຖ້າພວກເຮົາສັງເກດເບິ່ງກິດຈະການຂອງແມງໄມ້ຕົວນ້ອຍໆ, ພວກເຮົາສາມາດຮຽນຮູ້ເອົາຫລັກການອັນສລາດມາໃຊ້ໃນຊີວິດ. ໃຜກໍຕາມທີ່ເບິ່ງມົດຈະສັງເກດເຫັນການເຄື່ອນຍ້າຍທີ່ມີເປົ້າໝາຍໃນການຮິບໂຮມອາຫານແລະການຈັດຕຽມໃນການແບ່ງປັນໜ້າທີ່ຂອງພວກເຂົາ. ພວກມົດມັນຮູ້ຈັກທີ່ຈະເຮັດວຽກຢ່າງດຸໝັ່ນແລະເອົາການເອົາງານດ້ວຍຕົວມັນເອງ. ພວກມັນບໍ່ຕ້ອງການຜູ້ນຳ, ຜູ້ບໍຣິຫານງານ, ຫລືຜູ້ອອກລະບຽບບັງຄັບໃຫ້ເຂົາອອກແຮງງານ. ມັນຊ່າງແຕກຕ່າງຈາກພວກບາງຄົນໃນພວກເຮົາທີ່ຕັ້ງໃຈເຮັດວຽກກໍໃນຕອນທີ່ມີຄົນຈີ້ແນມຕາເບິ່ງແລະໃຫ້ຖືຮັກສາຄວາມຮັບຜິດຊອບເທົ່ານັ້ນ.

ບົດຮຽນທີ່ໄດ້ຈາກຕົວຢ່າງນີ້, ແລະຈາກພຣະທັມສຸພາສິດ 21:5, ນັ້ນກໍຄືຕ້ອງດຸໝັ່ນໃນວຽກງານຂອງພວກເຮົາ. ຄວາມສັດຊື່ໃນການອອກແຮງງານຈະນຳໄປສູ່ຜົນກຳໄລ, ຕໍ່ຜູ້ທີ່ເຮັດວຽກເອງກໍຈະໄດ້ໃນສິ່ງທີ່ຕ້ອງການແລະ

ຕລອດເຖິງຄອບຄົວແລະນຳຜົນສູ່ສັງຄົມໃນທົ່ວໄປ. ແຕ່ກົງກັນຂ້າມ, ຜູ້ທີ່ກຽດຄ້ານເຮັດວຽກງານກໍມີແຕ່ທຸກຈົນລົງ. ພຣະເຈົ້າອວຍພອນຜູ້ທີ່ມີປະຕິກິຣິຍາດີແລະຈິງຈັງຕໍ່ວຽກ, ໃນຂະນະດຽວກັນຜູ້ແຄະແລະຫລີກວຽກກໍຕົກສູ່ການທໍຣະມານແຫ່ງຜົນຂອງບັນຫາຈາກຄວາມກຽດຄ້ານນັ້ນ. ຜູ້ທີ່ສລາດເຮັດໃຫ້ຕົວເອງແລະຄອບຄົວໄດ້ທຸກສິ່ງທີ່ຕ້ອງການ ແລະປະຖິ້ມຄວາມກຽດຄ້ານໄວ້ທີ່ແຄມທະເລ.

**3. <u>ຄວນຈະມີທັສນະທີ່ຖືກຕ້ອງຕໍ່ວຽກງານ</u>** (ເພງສັຣເສີນ 127:2)

ຂະນະທີ່ແຮງງານແມ່ນຂອງປະທານມາຈາກພຣະເຈົ້າ,ພວກເຮົາຄວນຈະສືບຕໍ່ຮັກສາເຮັດໃຫ້ສົມດູນກ້ຳເກິ່ງໃນດ້ານອື່ນໆຂອງຊີວິດ. ໃນພຣະທັມເພງສັນຣະເສີນໄດ້ຢ້ຳເຖິງພຣະພອນຂອງພຣະເຈົ້າຕໍ່ເຮືອນແລະຄອບຄົວ, ຜູ້ຂຽນເພງສັຣເສີນໄດ້ໜູນໃຈຜູ້ທີ່ອ່ານໃຫ້ຖືຮັກສາວຽກງານໃນທັສນະທີ່ຖືກຕ້ອງ.

ບາງຄົນກໍເຮັດກາຍຄວາມດຸໝັ່ນໄປອີກແລະເມີຍເສີຍຕໍ່ການພັກຜ່ອນ, ຕໍ່ການເບົາສມອງ, ແລະແມ້ກະທັ້ງຕໍ່ການຊອກຫາເງິນມາສູ່ຄອບຄົວ, ຕໍ່ການຮັບຮູ້, ແລະການບັນລຸຜົນ. ຜູ້ຂຽນເພງສັນຣະເສີນໄດ້ໃຫ້ຄຳແນະນຳໄວ້ວ່າມັນເປັນການໄຣ້ປໂຍດທີ່ຈະນອນເດິກລຸກເຊົ້າເຮັດວຽກໜັກຫາລ້ຽງຊີບ. ບາງຄົນນອນເດິກຕື່ນແຕ່ເຊົ້າ, ເຮັດວຽກທຳງານຫລາຍຊົ່ວໂມງແຕ່ລະມື້ຕລອດໂດຍບໍ່ໄດ້ພັກຜ່ອນ. ພຣະເຈົ້າບໍ່ໄດ້ສ້າງມະນຸດໃຫ້ກຽດຄ້ານຫລືໃຫ້ເຮັດວຽກກາຍຂອບເຂດ. ພຣະອົງປະທານການຫລັບນອນໃຫ້ເປັນສ່ວນນຶ່ງໃນແຜນການຂອງການຊົງສ້າງເພາະວ່າພຣະອົງຮັກເຮົາ. ພຣະເຈົ້າຮູ້ຈັກວ່າພວກເຮົາຕ້ອງການການພັກຜ່ອນເພື່ອໃຫ້ມີປະສິດທິພາບໃນການປະກອບວຽກງານ, ຄອບຄົວແລະດ້ານອື່ນໆອີກຂອງຊີວິດ.

ພຣະຄຳຂໍ້ນີ້ລວມອີກຫລາຍຂໍ້ກໍເນັ້ນໃສ່ຫລາຍດ້ານຂອງຊີວິດຄອບຄົວ. ຂໍ້ພຣະຄຳເຫລົ່ານີ້ເລັງໃສ່ວ່າພຣະເຈົ້າເປັນພື້ນຖານຂອງເຮືອນ. ພຣະພອນຂອງພຣະເຈົ້າລວມທັງລູກເຕົ້າຜູ້ທີ່ຕ້ອງການພໍ່ແມ່ທີ່ດຸໝັ່ນຂຍັນພຽນໃນການເຮັດວຽກງານເພື່ອຄ້ຳຊູສິ່ງທີ່ຈຳເປັນຂອງພວກເຂົາ, ແຕ່ວ່າພວກເຂົາຍັງຕ້ອງການພໍ່ແມ່ທີ່ມີເວລາອັນເປັນປໂຍດເພື່ອຮັບຟັງເຣື່ອງສ່ວນຕົວໃຫ້ກັບເຂົາ. ພໍ່ແມ່ທີ່ເປັນຄຣິສຕຽນບໍ່ຄວນຈະມີຄວາມຮູ້ສຶກທີ່ວ່າພວກເຂົາຕ້ອງເມີນເສີຍຕໍ່ໜ້າທີ່ຮັບຜິດຊອບໃນການລ້ຽງລູກເຕົ້າແລ້ວຕິດຕາມທຸຣະການງານແລະການທີ່ຈະມີລາຍໄດ້ສູງເພີ້ມເຕີມ. ການສຸມກຳລັງແນໃສ່ວຽກງານຫລາຍເກີນໄປແມ່ນອອກນອກຂອບເຂດທີ່ພຣະເຈົ້າອອກແບບເອົາໄວ້ໃຫ້. ໂດຍຄວາມຊ່ອຍເຫລືອຂອງພຣະເຈົ້າ, ພວກທີ່ເຊື່ອສາມາດທີ່ຈະເຮັດວຽກອັນເປັນສ່ວນສຳຄັນໃນການສົມດູນກ້ຳເກິ່ງຂອງຊີວິດ.

**4. <u>ວຽກງານນຳກຽດສູ່ພຣະເຈົ້າ</u>** (ໂກໂລຊາຍ 3:22-4:1)

ແມ່ນຫຍັງຄືເປົ້າໝາຍອັນສູງສຸດໃນວຽກງານຂອງພວກເຮົາ? ຄືກັນກັບດ້ານອື່ນໆຂອງຊີວິດ, ເຮົາຈະເຮັດແນວໃດໃນວຽກງານຂອງພວກເຮົາເພື່ອນຳພຣະກຽດມາສູ່ພຣະເຈົ້າ. ອັຄສາວົກໂປໂລໄດ້ໃຫ້ຈຸດນຶ່ງໃນຈົດໝາຍທີ່ສົ່ງໃຫ້ຄຣິສຕະຈັກເມືອງໂກໂລຊາຍ. ເຖິງແມ່ນວ່າເພິ່ນຈະເວົ້າເຖິງສາຍສຳພັນລະຫວ່າງຂ້ອຍໃຊ້ກັບນາຍກໍຕາມ, ຫລັກການກໍງ່າຍທີ່ຈະນຳມາໃຊ້ກັບຄົນສມັຍໃໝ່ລະຫວ່າງນາຍຈ້າງແລະລູກຈ້າງ. ການສົມທຽບນີ້ກໍບໍ່ໄດ້ບອກວ່ານາຍຈ້າງຄືກັບນາຍຫລືລູກຈ້າງຈະຄືກັບຂ້ອຍໃຊ້, ແທນທີ່ຈະເປັນຢ່າງນັ້ນ, ຄຳສອນນັ້ນກໍຄືໃຫ້ທຸກໆຄົນເຮັດວຽກງານດ້ວຍສຸດໃຈແລະປິຕິຍິນດີຄືກັນກັບເຮັດວຽກເພື່ອພຣະຜູ້ເປັນເຈົ້າ.

ຜູ້ອ່ານບາງຄົນກໍຈະຕະລຶງວ່າເປັນຫຍັງອາຈານໂປໂລຈຶ່ງບໍ່ກ່າວໂທດຕໍ່ພວກຂ້າທາດແຕ່ວ່າແທນທີ່ຈະເຮັດແນວນັ້ນເພິ່ນໃຫ້ແບບແຜນຂອງການທີ່ຈະໃຫ້ພຣະເຈົ້າພໍພຣະທັຍໃນຖານະທີ່ເປັນຂ້ອຍໃຊ້ແລະເປັນນາຍ. ລາຍລະອຽດຫລາຍຢ່າງຊ່ອຍໃຫ້ພວກເຮົາເຂົ້າໃຈຄວາມໝາຍຂອງອາຈານໂປໂລ. **ນຶ່ງ**, ຄວາມໝາຍຕົ້ນຕໍຂອງພຣະທັມຕອນນີ້ (3:18-4:1) ເວົ້າເຖິງແບບແຜນຂອງການດຳລົງຊີວິດຕາມຖານະຂອງແຕ່ລະຄົນ. **ສອງ**, ຄວາມໝາຍແບບກວ້າງໃນພຣະທັມໂກໂລຊາຍກ່ຽວເຣື່ອງການຕໍ່ຕ້ານຕໍ່ຫລັກຄວາມເຊື່ອຂອງຄູສອນປອມເຣື່ອງພຣະຄຣິດ, ບໍ່ແມ່ນການໄຈ້ແຍກແບບແຜນໜ້າທີ່ທາງສັງຄົມ. **ສາມ**, ຂະນະທີ່ພວກເຮົາບໍ່ສາມາດຮູ້ຄວາມຄິດທັງໝົດຂອງອາຈານໂປໂລທີ່ໄດ້ຂຽນໄວ້ໃນຈົດໝາຍສະບັບນີ້, ພວກເຮົາກໍສາມາດພໍເດົາໄດ້ວ່າເພິ່ນຮູ້ວ່າຮີດຄອງປະເພນີບໍ່ສາມາດປ່ຽນໄດ້ໃນມື້ນຶ່ງ

ຍາມດຽວ.

ເຫດຜົນອີກຢ່າງນຶ່ງທີ່ອາຈານໂປໂລບໍ່ໄດ້ກ່າວໂທດການເປັນຂ້າທາດຢ່າງເປີດເຜີຍກໍແມ່ນວ່າເພິ່ນໄດ້ເວົ້າເຖິງແຕ່ຄວາມວິຕົກກັງວົນໃນຊົ່ວຂະນະນັ້ນ. ປານນັ້ນ, ເພິ່ນກໍຍັງໄດ້ຊັກຊວນໃຫ້ພວກລູກຈ້າງແລະພວກນາຍໄດ້ດໍາຣົງຊີວິດໃນສາຍສັມພັນຂອງພຣະເຈົ້າເຖິງແມ່ນວ່າຈະຢູ່ໃນໂລກແບບບໍ່ມີພຣະເຈົ້າກໍຕາມ. ສິ່ງທີ່ຫນ້າສົນໃຈກໍຄື, ຂະນະທີ່ພຣະຄັມພີບໍ່ໄດ້ກ່າວໂທດແບບແຜນການເປັນຂ້ອຍໃຊ້ຢ່າງເປີດເຜີຍ, ການຍອມຮັບເອົາຫລັກການຕາມພຣະຄັມພີໄດ້ແຜ່ຂຍາຍທົ່ວໄປ (ຫລາຍຢ່າງແມ່ນມີເຄົ້າມູນຈາກການຂຽນຂອງອາຈານໂປໂລ) ມັນໄດ້ເຮັດໃຫ້ການລົບລ້າງການເປັນຂ້າທາດເກີດຂຶ້ນໃນຫລາຍໆສັງຄົມໃນປວັດສາດຕລອດມາ.

ໂປໂລໄດ້ອອກຄໍາສັ່ງໃຫ້ຜູ້ທີ່ເປັນນາຍຈົ່ງກະທໍາໃນສິ່ງທີ່ຖືກຕ້ອງແລະເປັນທັມຕໍ່ຜູ້ທີ່ເຮັດວຽກງານໃຫ້ພວກເຂົາ. ເພິ່ນໄດ້ເຕືອນພວກເຂົາວ່າພວກເຂົາກໍມີນາຍຢູ່ເທິງສວັນຄືກັນ. ເພິ່ນຂຽນເຖິງພວກຂ້ອຍໃຊ້ວ່າວຽກງານທຸກຢ່າງໃຫ້ເຮັດເພື່ອພຣະຜູ້ເປັນເຈົ້າແລະບໍ່ແມ່ນເພື່ອມະນຸດ. ຖ້າຫາກພວກເຂົາປະຕິບັດ, ພວກເຂົາກໍມີຫວັງທີ່ຈະໄດ້ຮັບລາງວັນຈາກພຣະຜູ້ເປັນເຈົ້າ. ທັງສອງກຸ່ມນີ້ແມ່ນຮັບໃຊ້ພຣະຄຣິດອົງພຣະຜູ້ເປັນຈົ້າ. ພວກທີ່ເຮັດຜິດຈະໄດ້ຮັບການຜິດຕອບແທນເພາະວ່າພຣະເຈົ້າບໍ່ເຂົ້າຂ້າງຜູ້ນຶ່ງຜູ້ໃດ.

ລູກຈ້າງທີ່ເປັນຄຣິສຕຽນຄວນເຮັດວຽກຂອງຕົນໃຫ້ພໍພຣະທັຍພຣະເຈົ້າບໍ່ພຽງແຕ່ໃຫ້ພໍໃຈນາຍຈ້າງເທົ່ານັ້ນ. ນາຍຈ້າງທີ່ເປັນຄຣິສຕຽນຄວນປະຕິບັດຕໍ່ລູກຈ້າງຢ່າງທ່ຽງທັມ. ພວກທີ່ເຊື່ອຄວນປະກອບວຽກງານຂອງພວກເຂົາໃນຄວາມຫວັງໃຈທີ່ຈະນໍາພຣະກຽດມາສູ່ອົງພຣະຜູ້ເປັນເຈົ້າ.

ທ່າທີຂອງທ່ານຕໍ່ວຽກງານຊີ້ໃຫ້ເຫັນຄວາມບໍ່ສົມດູນກໍ້າເກິ່ງໃນການດໍາຣົງຊີວິດບໍ່? ທ່ານມີຄວາມເບື່ອນ່າຍທີ່ຈະຕ້ອງເຮັດວຽກງານເພື່ອການດໍາຣົງຊີວິດຫລື, ມີຄວາມຮູ້ສຶກກົງກັນຂ້າມຢ່າງທຽບບໍ່ຕິດ, ທ່ານສຸມກໍາລັງທັງຫມົດໃສ່ໃນວຽກນັ້ນບໍ່? ການຮໍ່າຮຽນໃນມື້ນີ້ເປີດເຜີຍຫລັກການສໍາຄັນສໍາລັບການປະກອບວຽກງານທີ່ນໍາຜົນປໂຍດມາສູ່ຜູ້ທີ່ເຊື່ອແລະນໍາພຣະກຽດມາສູ່ອົງພຣະຜູ້ເປັນເຈົ້າ:

- ການເຮັດວຽກງານແມ່ນກົງຕໍ່ແຜນການຊົງສ້າງຂອງພຣະເຈົ້າແລະເປັນຕາມຕົວຢ່າງທີ່ພຣະອົງໄດ້ທໍາໄວ້.
- ການເຮັດວຽກງານແມ່ນພຣະພອນຕໍ່ຜູ້ທີ່ເຮັດວຽກນັ້ນແລະຕໍ່ສັງຄົມທົ່ວໄປ.
- ວຽກງານຄວນຈະສົມດູນກໍ້າເກິ່ງກັບດ້ານອື່ນໆຂອງຊີວິດ.
- ວຽກງານຄວນເປີດເຜີຍທ່າທີແລະການປະຕິບັດທີ່ຖືກຕ້ອງໂດຍຜູ້ທີ່ເຮັດວຽກແລະຜູ້ຄວບຄຸມງານນັ້ນເພື່ອວ່າພຣະເຈົ້າຈະໄດ້ຮັບກຽດຕິຍົດ.

*ທ່ານໄດ້ນໍາພຣະກຽດມາສູ່ພຣະຜູ້ເປັນເຈົ້າໂດຍການປະກອບວຽກງານຂອງທ່ານບໍ່?*

ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ www.lsbf.org by PA.